ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ສຳນັກງານໃຫຍ່

ເລກທີ: 0405 /ທຄຕລ .2023.........

ນະຄອນຫຼວງວຽງຈັນ, ວັນທີ: 01 FEB 2023

# ໜັງສືແຈ້ງເຊີນ

**ເຖິງ :** ບັນດາບໍລິສັດ, ຫ້າງຮ້ານທີ່ຜະລິດຈຳໜ່າຍສະໜອງຖົງຢາງ.

**ເລື່ອງ :** ແຈ້ງເຊີນເຂົ້າຮ່ວມປະມູນລາຄາຖົງຢາງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍສະໜອງຖົງຢາງ ຊາບວ່າ ທຄຕລ ມີຄວາມຕ້ອງການຖົງຢາງ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທຄຕລ ດັ່ງລາຍການລຸ່ມນີ້ :

| ລ/ດ | ລາຍການ | ຈຳນວນ (ກິໂລ) | ລາຄາ/ໜ່ວຍ ( ກີບ ) | ລາຄາລວມ | ໄລຍະການ ຈັດສົ່ງ |
|---|---|---|---|---|---|
| 1 | ຖົງຢາງດຳ ຂະໜາດ 9*18" ໜາ 0.10 ມມ | 120 | | | |
| 2 | ຖົງຢາງຂາວ ຂະໜາດ 12*20" ໜາ 0.15 ມມ | 75 | | | |
| 3 | ຖົງຢາງດຳ ຂະໜາດ 12*26" ໜາ 0.15 ມມ | 250 | | | |
| 4 | ຖົງຢາງຂາວ ຂະໜາດ 12*26" ໜາ 0.15 ມມ | 150 | | | |
| 5 | ຖົງຢາງດຳ ຂະໜາດ 15*30" ໜາ 0.15 ມມ | 75 | | | |
| 6 | ຖົງຢາງຂາວ ຂະໜາດ 15*30" ໜາ 0.15 ມມ | 375 | | | |
| 7 | ຖົງຢາງດຳ ຂະໜາດ 20*40" ໜາ 0.18 ມມ | 600 | | | |

❖ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

1. **<u>ເອກະສານຊອງທີ 1 (ບໍ່ປິດຊອງ):</u>** ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍຖົງຢາງດຳ ຫຼື ເຄື່ອງໃຊ້ຫ້ອງການ ແລະ ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ 2021 ແລະ ຟອມຂອງ ທຄຕລ ຕົວຢ່າງ ຄັດຕິດດ້ານຫຼັງ.

2. **<u>ເອກະສານຊອງທີ 2 ( ປິດຊອງ):</u>** ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.

- ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ, ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າຢ່າງດຽວ.
- ກຳນົດຍື່ນເອກະສານ 02 ຊອງຂ້າງເທິງ ແລະ ຕົວຢ່າງສິນຄ້າ ຢ່າງໜ້ອຍ 1 ຫໍ່ ແມ່ນສາມາດຍື່ນໄດ້ນັບແຕ່ມື້ນີ້ ຈົນເຖິງ ທີ 07/02/2023 ກ່ອນເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C .

❖ **ໝາຍເຫດ:**

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
2. ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ບັນທະລາດ ແກ້ວປະເສີດ

ສອບຖາມຂໍ້ມູນເພີ່ມຕື່ມທີ່: ເບີຕິດຕໍ່ 021 213 200-414, E-mail: procurement@bcel.com.la

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………/ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2021 | ໄລຍະເວລາໃນການດໍາເນີນທຸລະກິດ | ຜົນງານຜ່ານມາ ( ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກໍານົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ…... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ……………………
ຜູ້ອໍານວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: